VIENTIANE CENTER
ວຽງຈັນເຊັ້ນເຕີ
ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸ້ມວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ບົດລາຍງານການເຄື່ອນໄຫວທຸລະກິດ
6 ເດືອນຕົ້ນປີ 2022
ຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

1. ຂໍ້ມູນກ່ຽວກັບບໍລິສັດ

1.1 ວິໄສທັດ

ວຈຊຕ ມຸ່ງໝັ້ນ ການສ້າງແບຣນສູນການຄ້າອັນດັບໜຶ່ງຢູ່ລາວ, ເປັນສູນກາງການຄ້າ, ສູນກາງສຳນັກງານ, ສູນກາງການເງິນ ແລະ ສູນກາງການວາງສະແດງ ຂອງປະເທດລາວ.

1.2 ພາລະກິດ

ນຳເອົາວິຖີຊີວິດແບບຕົວເມືອງທີ່ເຕັມໄປດ້ວຍຄວາມສຸກໃຫ້ແກ່ປະເທດລາວ.

1.3 ແນະນຳບໍລິສັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 30 ພະຈິກ 2017 ໂດຍບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ທີ່ຮ່ວມກັນສ້າງຕັ້ງຂຶ້ນລະຫວ່າງກຸ່ມບໍລິສັດ ກໍ່ສ້າງ ລົງທຶນ ແລະ ຖືຮຸ້ນແຂວງຢຸນນານ ຈຳກັດ ແລະ ກຸ່ມບໍລິສັດ ກຣິດຕະພິງ ຈຳກັດ. ບໍລິສັດໄດ້ສຳເລັດການຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການໃນວັນທີ 31 ພຶດສະພາ 2019 (ຊື່ຫຼັກຊັບ “VCL”).

ກິດຈະການຫຼັກ ຂອງບໍລິສັດແມ່ນພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອໃຫ້ເຊົ່າ-ຂາຍ, ທຸລະກິດຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນປະກອບດ້ວຍ ການເກັບຄ່າເຊົ່າພື້ນທີ່ໃນສູນການຄ້າ ວຽງຈັນເຊັ້ນເຕີ ແລະ ຫັກເອົາເປີເຊັນຕາມຍອດຂາຍເປັນຄ່າບໍລິຫານສູນການຄ້າ, ການຈັດງານວາງສະແດງເຊິ່ງເປັນກຳມະສິດພ້ອມທັງບໍລິຫານພື້ນທີ່ວາງສະແດງດ້ວຍການເກັບຄ່າເຊົ່າ, ການເກັບຄ່າເຊົ່າປ້າຍໂຄສະນາ, ການເກັບຄ່າເຊົ່າສຳນັກງານຫ້ອງການ .

ໂດຍຜ່ານການສ້າງເປັນແບຣນຂອງຕົນ ເພີ່ມປະສິດທິພາບໃນວຽກງານການບໍລິການ ປັບປຸງຮູບແບບການດຳເນີນທຸລະກິດ, ສູນການຄ້າ ແລະ ສຳນັກງານຫ້ອງການໄດ້ດຶງດູດທຸລະກິດທີ່ມີຊື່ສຽງເຊັ່ນ: ທະນາຄານແຫ່ງ ສປ ຈີນ, ຮ້ານກາເຟ ອາເມຊອນ, ຮ້ານມິນິໂຊ, ໂຮງໜັງ MAJOR ແລະ ວິສາຫະກິດຕ່າງປະເທດຂະໜາດໃຫຍ່ ເຊັ່ນ: ບໍລິສັດໄຟຟ້າເກົາຫຼີ, ບໍລິສັດ ປະກັນຊີວິດພຣຸເດັນໂຊ, ບໍລິສັດ DKSH ໄດ້ເຂົ້າມາເຊົ່າພື້ນທີ່ຮ້ານຄ້າ ແລະ ອາຄານສຳນັກງານ ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ. ມາເຖິງປະຈຸບັນ ວຽງຈັນເຊັ້ນເຕີ ໄດ້ຄ່ອຍໆກາຍເປັນສູນກາງການຄ້າ, ສູນກາງສຳນັກງານ , ສູນກາງທາງດ້ານການເງິນ ແລະ ສູນກາງການຈັດງານວາງສະແດງສິນຄ້າໃນລາວ, ເປັນແບຣນສູນການຄ້າອັນດັບໜຶ່ງຢູ່ລາວ ແລະ ຕິວແບບການຮ່ວມມື ຂອງລັດຖະບານສອງຊາດລາວ-ຈີນ.

1.4 ຂໍ້ມູນທິດໄປຂອງບໍລິສັດ

1.4.1 ທີ່ຕັ້ງ

ສຳນັກງານຂອງ ວຈຊຕ ຕັ້ງຢູ່ ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ.

1.4.2 ຕິດຕໍ່ ແລະ ພົວພັນ

ເບີໂທ (+856-21) 228299

ແຟັກ (+856-21) 228299

ເວັບໄຊ: http://www.vcplao.com/

1.4.3 ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 30 ມິຖຸນາ 2022 ແມ່ນ 147,199,900,000 ກີບ.

1.4.4 ຂໍ້ມູນກ່ຽວກັບຜູ້ຖືຮຸ້ນ

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງ ວຈຊຕ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປ ນະວັນທີ 16 ສິງຫາ 2022 ໄດ້ແກ່:

(1) ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕ່ອນເໜືອ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 95.999.200 ຮຸ້ນ ເທົ່າກັບ 65.22% ຂອງຈຳນວນຮຸ້ນທັງໝົດ.

(2) ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 47.464.600 ຮຸ້ນ ເທົ່າກັບ 32.24% ຂອງຈຳນວນຮຸ້ນທັງໝົດ.

2. ສະພາບໂດຍລວມຂອງຂະແໜງການ ແລະ ຂໍ້ມູນສຳຄັນທາງການເງິນ

2.1 ສະພາບໂດຍລວມຂອງຂະແໜງການ

ໃນຊ່ວງຫົກເດືອນຕົ້ນປີ 2022 ທີ່ຜ່ານມາ ພາບລວມເສດຖະກິດຂອງລາວ ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດ COVID-19 ຢ່າງໜັກໜ່ວງ. ຕັ້ງແຕ່ເດືອນມັງກອນ ປີ 2022 ເປັນຕົ້ນມາ, ລັດໄດ້ອອກໜັງສືແຈ້ງການກ່ຽວກັບການເປີດດ່ານສາກົນສາກົນ ແລະ ດ້ານທ້ອງຖິ່ນທັງໝົດ, ຕະຫຼາດການທ່ອງທ່ຽວໃນລາວຄ່ອຍໆຟື້ນຟູຂຶ້ນ , ແຕ່ຍ້ອນຄ່າເງິນກີບລາວຫຼຸດລົງ ແລະ ໄດ້ຮັບຜົນກະທົບຕໍ່ເນື່ອງຈາກການແຜ່ລະບາດຂອງພະຍາດດັ່ງກ່າວ, ຕະຫຼາດຂາຍຍ່ອຍການຄ້າຂອງນະຄອນຫຼວງວຽງຈັນສືບຕໍ່ໃນສະພາຍການຖອຍລົງ, ທຸລະກິດການໃຫ້ເຊົ່າຮ້ານຄ້າ ແລະ ອາຄານສຳນັກງານ ໄດ້ຮັບຜົນກະທົບຢ່າງຫຼວງຫຼາຍຈາກສະພາບແວດລ້ອມຂອງຕະຫຼາດ.

ໃນຂະນະດຽວກັນ, ການແຂ່ງຂັນດ້ານອະສັງຫາລິມະຊັບເຊິ່ງການຄ້າໃນນະຄອນຫຼວງວຽງຈັນ ກໍນັບມື້ນັບສູງຂຶ້ນເຊັ່ນ:

ທຳອິດແມ່ນທຸລະກິດດ້ານການໃຫ້ເຊົ່າຮ້ານ, ວຽງຈັນເຊັນເຕີກຳລັງປະເຊີນກັບການແຂ່ງຂັນຈາກຕະຫຼາດອ້ອມຂ້າງໃນປະເພດດຽວກັນ, ໃນບາງຕະຫຼາດຄ່າເຊົ່າຫຼຸດລົງຢ່າງຫຼວງຫຼາຍ, ການແຂ່ງຂັນດ້ວຍລາຄາຕ່ຳໄດ້ສົ່ງຜົນກະທົບຂະໜາດໃຫ້ໜຶ່ງຕໍ່ສູນການຄ້າວຽງຈັນເຊັນເຕ. ອັນທີສອງແມ່ນທຸລະກິດດ້ານການໃຫ້ເຊົ່າຫ້ອງການ, ຄວາມຕ້ອງການໃນການເຊົ່າຫ້ອງການໃນຕະຫຼາດນະຄອນຫຼວງວຽງຈັນມີຈຳກັດ ແລະ ມີຈຳນວນລູກຄ້າເພີ່ມຂຶ້ນເລັກໜ້ອຍໃນໄລຍະຫົກເດືອນຕົ້ນປີ, ໂຄງການຫ້ອງການທີ່ສ້າງຂຶ້ນໃໝ່ ໂດຍທົ່ວໄປຈະຫຼຸດຄ່າເຊົ່າເພື່ອເປັນການດຶງດູດລູກຄ້າໃໝ່, ເຊິ່ງເຮັດໃຫ້ມີການແຂ່ງຂັນທີ່ສູງຂຶ້ນ.

2.2 ຜົນທຸລະກິດພື້ນເດັ່ນ

ຕໍ່ກັບສະພາບທີ່ກ່າວມາຂ້າງເທິງ, ວຽງຈັນເຊັນເຕີ ໄດ້ຍຶດໝັ້ນທ່າແຮງທີ່ມີສູນການຄ້າ ແລະ ອາຄານຫ້ອງການປະສົມປະສານກັນ, ໂດຍທິດທາງການຈັດກິດຈະກຳເພື່ອດຶງດູດລູກຄ້າເດີນເຂົ້າມາຫ້າງຮັບໃຊ້ບໍລິການ ແລະສ້າງຈຳນວນຜູ້ບໍລິໂພກໃຫ້ນັບມື້ນັບເພີ່ນຂຶ້ນ, ສືບຕໍ່ປັບປຸງຄຸນນະພາບດ້ານການບໍລິການຂອງຊັບສິນ, ສ້າງຄວາມສະດວກສະບາຍໃຫ້ແກ່ລູກຄ້າໃນການຈັບຈ່າຍໃຊ້ສອຍ ແລະ ການດຳເນີນງານ, ໃຫ້ນະໂຍບາຍການສະໜັບສະໜຸນແກ່ລູກຄ້າໃນໄລຍະການລະບາດຂອງພະຍາດ COVID-19 ເພື່ອສ້າງອັດຕາການໃຫ້ເຊົ່າໃຫ້ມີສະຖຽນລະພາບ. ພະແນກການຕະຫຼາດໄດ້ກຽມພ້ອມມາດຕະການໃນການປ້ອງກັນພະຍາດລະບາດ ແລະ ໄດ້ຈັດງານກິດຈະກຳຂະໜາດກາງ ແລະ ໃຫຍ່ຢ່າງປອດໄພທັງໝົດ 27 ກິດຈະກຳເຊັ່ນ: ງານມະຫາກຳສິ່ງເສີມແຮງງານລາວຂະໜາດໃຫຍ່ຄັ້ງທຳອິດໃນລາວ, ຮີບຮ້ອນລາວ 2022,ງານວາງສະແດງຕະຫຼາດນັດລາວໂຫລະຄົມ, ງານວາງສະແດງຫັດຖະກຳພື້ນເມືອງລາວ, Food Carnival ແລະ ວັນເດັກນ້ອຍລາວ, ງານວາງສະແດງລົດຍົນ ໄດ້ເຊື່ອມຍັງໄດ້ເຊື່ອມຍົງກັບຜູ້ຈຳໜ່າຍລົດອື່ນໆເພື່ອຮ່ວມມືດຳເນີນງານວາງສະແດງ ເຊັ່ນ: ບໍລິສັດລົດຍົນ Geely, Ford, Kia, Mazda, BYD ແລະ ຢາງລົດ Michelin. ໃນດ້ານການລົງທຶນດ້ານການໂຄສະນາ ໄດ້ສ້າງສາຍພົວພັນຮ່ວມມືໄລຍະຍາວກັບ Food Panda ແລະ ໄດ້ເຊັນສັນຍາເຊົ່າປ້າຍໂຄສະນາເທິງຝາແກ້ວຂະໜາດໃຫຍ່ຢູ່ບ່ອນໜ້າສູນການຄ້າ, ສ່ວນໂຮງໜັງໄດ້ມີການອັບເດດໜັງໃໝ່ ແລະ ກິດຈະກຳຫຼຸດລາຄາ, ເພື່ອເພີ່ມຄວາມໝັ້ນໃຈຜູ້ໃຊ້ບໍລິການ ແລະ ຄ່ອຍໆເພີ່ມອັດຕາຜູ້ເຂົ້າຊົມຮູບເງົາໃຫ້ຫຼາຍຂຶ້ນ.

2.3 ຂໍ້ມູນທາງດ້ານການເງິນທີ່ສຳຄັນໃນໄລຍະຫົກເດືອນຕົ້ນປີ 2022

2.3.1 ລາຍຮັບ

ໄລຍະຫົກເດືອນຕົ້ນປີ 2022, ລາຍໄດ້ຈາກການດຳເນີນທຸລະກິດຂອງບໍລິສັດແມ່ນເປັນເງິນ 4.715.985.043,00 ກີບ, ມີການຫຼຸດລົງ 7,92% ຈາກໄລຍະອັນດຽວກັນຂອງປີທີ່ແລ້ວ. ໃນນັ້ນ, ລາຍຮັບຈາກການ

ໃຫ້ເຊົ່າຮ້ານຂາຍເຄື່ອງແມ່ນເປັນເງິນ 1.817.603.376,25 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີ່ຫ້ອງການ ແມ່ນເປັນເງິນ 1.426.097.135,83 ກີບ, ລາຍໄດ້ຈາກການຮ່ວມທຸລະກິດ ແມ່ນເປັນເງິນ 725.084.810 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີ່ຈັດງານ ແມ່ນເປັນເງິນ 292.564.591,02 ກີບ, ລາຍໄດ້ຈາກການໃຫ້ເຊົ່າປ້າຍໂຄສະນາ ແມ່ນເປັນເງິນ 452.115.597,62 ກີບ ແລະ ລາຍຮັບອື່ນໆອີກ 2.519.532,28 ກີບ.

ເຫດຜົນທີ່ລາຍຮັບຫຼຸດລົງ ໜຶ່ງແມ່ນຍ້ອນການແຜ່ລະບາດຂອງພະຍາດໂຄວິດ-19, ສະກຸນເງິນກີບລາວອ່ອນຄ່າຢ່າງຮ້າຍແຮງ ພາຍໃຕ້ຜົນກະທົບຈາກສະພາບແວດລ້ອມມະຫາພາກ, ທຸລະກິດການຄ້າຂາຍຍ່ອຍຍັງສືບຕໍ່ຕົກຕ່ຳໂດຍບໍ່ມີການຟື້ນຟູ, ເຮັດໃຫ້ຍີ່ຫໍ້ສາກົນມີຄວາມຫຍຸ້ງຍາກຫຼາຍຂຶ້ນທີ່ຈະເຂົ້າມາລົງທຶນໃນສູນການຄ້າ, ໃນເວລາດຽວກັນ, ເນື່ອງຈາກການຄວບຄຸມງົບປະມານໃນການດຳເນີນງານຂອງບັນດາວິສາຫະກິດ, ເຮັດໃຫ້ການສຳເລັດຜົນທາງດ້ານການເຊົ່າຫ້ອງການໃຊ້ເວລາດົນ ແລະ ການບັນລຸແຜນຂອງອາຄານສຳນັກງານຕ່ຳກວ່າການຄາດໝາຍ.

ສອງແມ່ນເນື່ອງຈາກປັດໃຈຄ່າຂອງເງິນກີບອ່ອນຕົວ, ລາຄານ້ຳມັນດິບເພີ່ມສູງຂຶ້ນ ເຮັດໃຫ້ເກີດອັດຕາເງິນເຟີ້ດ້ານການນຳເຂົ້າ ສິ່ງຜົນໃຫ້ລາຄາສິນຄ້າໃນລາວເພີ່ມຂຶ້ນຢ່າງຫຼວງຫຼາຍ, ກຳລັງການຊື້ ແລະ ຄວາມໝັ້ນໃຈທີ່ຈະບໍລິໂພກຂອງປະຊາຊົນລາວໂດຍທົ່ວໄປໄດ້ຫຼຸດລົງ, ເຮັດໃຫ້ຜູ້ປະກອບການຢູ່ວຽງຈັນເຊັນເຕີ ປະເຊີນກັບຄວາມຫຍຸ້ງຍາກໃນການດຳເນີນກິດຈະການ. ວຈຊຕ ໄດ້ອອກນະໂຍບາຍສະໜັບສະໜຸນເຊັ່ນ: ການຫຼຸດຄ່າເຊົ່າ ແລະ ການຍົກເວັ້ນຄ່າເຊົ່າໃຫ້ແກ່ຊາວຄ້າຂາຍເຄືອ ແລະ ວິສາຫະກິດ ເພື່ອຮັກສາສະຖຽນລະພາບອັດຕາການໃຫ້ເຊົ່າໃຫ້ຄົງທີ່.

ສາມແມ່ນຜູ້ເຊົ່າອາຄານສຳນັກງານໄດ້ຮັບຜົນກະທົບຈາກສະພາບແວດລ້ອມຕະຫຼາດ, ສິ່ງຜົນໃຫ້ມີການຫຼຸດງົບປະມານລົງ, ເຊິ່ງເຮັດໃຫ້ລູກຄ້າບາງພາກສ່ວນຍົກເລີກການເຊົ່າ ແລະ ຫຼຸດຜ່ອນພື້ນທີ່ການເຊົ່າ. ຫຼັງຈາກສະພາບກັບມາສູ່ແບບປົກກະຕິຂອງຍຸກໃໝ່ໃນຊ່ວງຫົກເດືອນຕົ້ນປີຜ່ານມາ ເຊິ່ງມີການຜ່ອນຜັນໃນລະດັບໜຶ່ງ. ຕະຫຼາດໂຄງການຕຶກສຳນັກງານໃນນະຄອນຫຼວງວຽງຈັນ ໂດຍທົ່ວໄປຈະຫຼຸດຄ່າເຊົ່າລົງ ເພື່ອດຶງດູດລູກຄ້າໃໝ່ ຫຼື ຮັກສາລູກຄ້າເກົ່າໄວ້. ຕະຫຼາດການໃຫ້ເຊົ່າເຮືອນວິລາທີ່ສາມາດໃຊ້ແທນຕຶກສຳນັກງານ ກໍ່ມີການຫຼຸດລາຄາລົງ ເຮັດໃຫ້ມີການແຂ່ງຂັນເພີ່ມຂຶ້ນ.

2.3.2 ກຳໄລ ແລະ ຂາດທຶນ

ໄລຍະຫົກເດືອນຕົ້ນປີ 2022, ລາຍຈ່າຍທັງໝົດຂອງ ວຈຊຕ ແມ່ນ 1.685.165.614 ກີບ, ເພີ່ມຂຶ້ນ 354% ຈາກປີທີ່ແລ້ວ, ເຫດຜົນຕົ້ນຕໍແມ່ນເພີ່ມຂຶ້ນຈາກຄ່າບໍລິການຄຸ້ມຄອງຊັບສິນ (ໃນຫົກເດືອນຕົ້ນປີ 2021, ບໍ່ໄດ້ໄລ່ຄ່າໃຊ້ຈ່າຍໃນການບໍລິການຄຸ້ມຄອງຊັບສິນນຳ ວຈຊຕ), ລາຍຮັບຈາກການປ່ຽນແປງຂອງອັດຕາແລກປ່ຽນ ແມ່ນ

427.157.606 ກີບ, ຫຼຸດລົງ 35,23% ຈາກໄລຍະອັນດຽວກັນຂອງປີທີ່ແລ້ວ, ເຫດຜົນຕົ້ນຕໍແມ່ນການຖືຄອງເງິນທີ່ບໍ່ແມ່ນສະກຸນເງິນກີບຂອງບໍລິສັດຫຼຸດລົງ, ກຳໄລກ່ອນເສຍອາກອນແມ່ນ 3.457.977.035 ກີບ, ອາກອນກຳໄລແມ່ນ 606.643.512 ກີບ, ກຳໄລສຸດທິແມ່ນ 2.851.333.523 ກີບ, ຫຼຸດລົງ 20% ຈາກໄລຍະອັນດຽວກັນຂອງປີທີ່ແລ້ວ.

ສາເຫດຂອງການຫຼຸດລົງຂອງກຳໄລສຸດທິ: ເນື່ອງຈາກລາຍໄດ້ຫຼຸດລົງ, ການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍໃນການບໍລິການຄຸ້ມຄອງຊັບສິນຊັບສິນ ແລະ ລາຍຮັບຈາກການປ່ຽນແປງຂອງອັດຕາແລກປ່ຽນຫຼຸດລົງ ເຮັດໃຫ້ກຳໄລສຸດທິຂອງບໍລິສັດຫຼຸດລົງ.

2.3.3 ຊັບສິນທັງໝົດ

ໄລຍະຫົກເດືອນຕົ້ນປີ 2022, ຊັບສິນທັງໝົດຂອງບໍລິສັດ ແມ່ນເປັນເງິນ 201.432.123.094 ກີບ, ເພີ່ມຂຶ້ນ 0,63% ຈາກໄລຍະອັນດຽວກັນຂອງປີທີ່ແລ້ວ.

ສາເຫດທີ່ເພີ່ມຂຶ້ນ ເນື່ອງຈາກກຳໄລຂອງບໍລິສັດໃນໄລຍະປີການລາຍງານບັນຊີ ເຮັດໃຫ້ມູນຄ່າຊັບສິນເພີ່ມຂຶ້ນ.

2.3.4 ໜີ້ສິນທັງໝົດ

ໄລຍະຫົກເດືອນຕົ້ນປີ 2022, ໜີ້ສິນທັງໝົດຂອງບໍລິສັດ ແມ່ນເປັນເງິນ 18.759.223.026 ກີບ, ຫຼຸດລົງ 0,66% ຈາກປີທີ່ແລ້ວ.

ສາເຫັດທີ່ຫຼຸດລົງ ເນື່ອງຈາກກຳໄລຂອງບໍລິສັດໃນໄລຍະປີການລາຍງານບັນຊີ ເຮັດໃຫ້ໜີ້ສິນຫຼຸດລົງ.

3.ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ ແລະ ຄະນະກຳມະການ

3.1 ສະພາບໍລິຫານ

3.1.1 ສະມາຊິກສະພາບໍລິຫານ

ສະພາບໍລິຫານ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ປະກອບດ້ວຍ 11 ທ່ານ:

- ທ່ານ ເຫີ ຈຸນ (Mr. He Jun) ເປັນປະທານ
- ທ່ານ ນາງ ອໍລະໄທ ສັນຕິຄົງຄາ ເປັນຮອງປະທານ
- ທ່ານ ບຸລະພາ ສັນຕິຄົງຄາ ເປັນສະມາຊິກ
- ທ່ານ ຫວັ່ງ ເຫວີຍຄຸນ (Mr. Wang Weikun) ເປັນສະມາຊິກ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ເປັນສະມາຊິກ

- ທ່ານ ຊຸນ ເຟີຍຫູ (Mr. Sun Feihu) ເປັນສະມາຊິກ
- ທ່ານ ຫຼໍ ສ້ຽວດົ້ງ (Mr. Luo Xiaodong) ເປັນສະມາຊິກ
- ທ່ານ ສ່ຽວ ໂຢ່ງ (Mr. Xiao Yong) ເປັນສະມາຊິກອິດສະຫຼະ
- ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi) ເປັນສະມາຊິກອິດສະຫຼະ
- ທ່ານ ວຽງສະຫວັນ ພັນທະລີ ເປັນສະມາຊິກອິດສະຫຼະ
- ທ່ານ ຈໍຊິ່ງ ບົວສີເນັ່ງມາ ເປັນສະມາຊິກອິດສະຫຼະ

3.1.2 ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

(1) ທ່ານ ເຫີ ຈຸນ (Mr. He Jun)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 11/04/1989
- ພາສາ: ຈີນ
- ຕຳແໜ່ງ: ປະທານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລຢູນນານ,ສາຂາບໍລິຫານທຸລະກິດ.

(2) ທ່ານ ນາງ ອໍລະໄທ ສັນຕິຄົງຄາ



- ສັນຊາດ: ລາວ

- ວັນເດືອນປີເກີດ: 21/01/1979
- ພາສາ: ລາວ,ໄທ
- ຕຳແໜ່ງ: ຮອງປະທານ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລແຫ່ງຊາດລາວ, ສາຂາບໍລິຫານທຸລະກິດ.

（3） ທ່ານ ບຸລະພາ ສັນຕິຄົງຄາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 06/02/1967
- ພາສາ: ຈີນ, ລາວ
- ຕຳແໜ່ງ: ເປັນສະມາຊິກ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລຫວາໝານຫຼີກົ່ງ ຈີນ, ສາຂາບໍລິຫານທຸລະກິດ.

（4）ທ່ານ ຫວັ່ງ ເຫວີຍຄຸນ (Mr. Wang Weikun)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 15/05/1984
- ພາສາ: ຈີນ,ອັງກິດ

- ຕຳແໜ່ງ: ເປັນສະມາຊິກ, ປະທານເຈົ້າໜ້າທີ່ດ້ານການບໍລິຫານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລເສດຖະກິດການຄ້າຕ່າງປະເທດ ຈີນ, ສາຂາການເງິນ,ລະດັບປະລິນຍາໂທຢູ່ມະຫາວິທະຍາໄລວາຊິດາ ຍີ່ປຸ່ນ, ສາຂາການພົວພັນສາກົນ.

(5) ທ່ານ ອຸ່ ຊິງຫວາ (Mr. Wu Xinghua)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 09/01/1984
- ພາສາ: ຈີນ, ອັງກິດ, ລາວ, ໄທ
- ຕຳແໜ່ງ: ເປັນສະມາຊິກ, ປະທານເຈົ້າໜ້າທີ່ດ້ານປະຕິບັດການ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລອັດສຳຊັ່ນ(Assumption Thai), ສາຂາບໍລິຫານທຸລະກິດ.

(6) ທ່ານ ຊຸນ ເຟີຍຫູ້ (Mr. Sun Feihu)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 17 /03/1986
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກ

- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລການເງິນ ຢຸນນານ ຈີນ, ສາຂາບໍລິຫານທຸລະກິດ..

（7）ທ່ານ ຫຼໍ ສ້ຽວດົ້ງ (Mr. Luo Xiaodong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 07/03/1989
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກ,ປະທານເຈົ້າໜ້າທີ່ດ້ານການເງິນ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລການເງິນ ແຂວງຢຸນນານ ຈີນ, ສາຂາການເງິນ-ບັນຊີ.

（8）ທ່ານ ສ່ຽວ ໂຢ່ງ (Mr. Xiao Yong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 02/07/1977
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ວິທະຍາໄລການເງິນ ແຂວງຊານຕົ້ງ ສປຈີນ, ສາຂາການເງິນ.

(9) ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 25/10/1976
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລ ແຂວງຢຸນນານ ສປຈີນ, ສາຂາກົດໝາຍ.

(10) ທ່ານ ວຽງສະຫວັນ ພັນທະລີ



- ສັນຊາດ: ລາວ
- ວັນເດືອນປີເກີດ: 25/01/1976
- ພາສາ:ລາວ, ອັງກິດ, ໄທ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາ ສາຂາກົດໝາຍວ່າ

ດ້ວຍບໍລິສັດ ແລະ ກົດໝາຍຫຼັກຊັບ.

(11) ທ່ານ ຈ໋ຊິ່ງ ບົວສີເນັ່ນມາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 15/12/1972
- ພາສາ: ລາວ, ອັງກິດ, ໄທ, ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

3.2 ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

3.2.1 ໄລຍະຫົກເດືອນຕົ້ນປີ 2022, ສະພາບໍລິຫານໄດ້ຈັດກອງປະຊຸມທັງໝົດ 1 ຄັ້ງ, ໃນນັ້ນ, ກອງປະຊຸມໄດ້ພິຈາລະນາ 11 ວາລະ ເຊັ່ນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ 2021 ແລະ ບົດລາຍງານການເງິນໂດຍຜ່ານການກວດສອບຈາກພາຍນອກ ແລະວາລະອື່ນໆ.

3.2.2 ອີງຕາມລະບຽບການທີ່ກ່ຽວຂ້ອງຂອງຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ຄະນະກຳມະການຄັດເລືອກໄດ້ດຳເນີນການຄັດເລືອກລາຍຊື່ຂອງສະມາຊິກສະພາບໍລິຫານ ສະໄໝທີ່ສາມ ແລະມີການລາຍງານຕໍ່ສະພາບໍລິຫານ ເພື່ອສະໜອງຂໍ້ມູນພື້ນຖານໃຫ້ບັນດາສະມາຊິກສະພາບໍລິຫານໃນການຕັດສິນໃຈ.

3.2.3 ຄະນະກຳມະການກວດສອບໄດ້ຈັດກອງປະຊຸມ 2 ຄັ້ງ ໂດຍອີງຕາມແຜນການເຄື່ອນໄຫວວຽກງານປະຈຳປີ, ເພື່ອທົບທວນບົດລາຍງານການເງິນປະຈຳປີ 2021 ຂອງບໍລິສັດໂດຍຜ່ານການກວດສອບຈາກພາຍນອກ ແລະ ບົດລາຍງານການເງິນໄຕມາດທີ 1 ປີ 2022 ເພື່ອຮັບປະກັນຄວາມຖືກຕ້ອງຂອງບົດລາຍງານການເງິນຂອງບໍລິສັດ.

4. ຄວາມຮັບຜິດຊອບໃນສັງຄົມ

(1) ລະຫວ່າງວັນທີ 16 ຫາ 20 ມີນາ 2022 ຜ່ານມາ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (LNCCI)ໄດ້ເປັນເຈົ້າພາບ ແລະ ສູນການຄ້າວຽງຈັນເຊັ້ນເຕີເປັນຜູ້ຮ່ວມຈັດງານ ໃນຫົວຂໍ້ "ງານສຳມະນາ ສົ່ງເສີມແຮງ

ງານລາວ" ແລະ ມີຫຼາຍໜ່ວຍງານເຂົ້າຮ່ວມເຊັ່ນ: ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກຳມະບານລາວ, ຊຶ່ງມີເນື້ອໃນກ່ຽວກັບວິທີການຟື້ນຟູການຈ້າງງານຢູ່ລາວຕາມທ່າອ່ຽງການແຜ່ລະບາດຂອງພະຍາດໃນປະຈຸບັນ, ເພື່ອຄົ້ນຄວ້າ ແລະ ປຶກສາຫາລືບັນຫາຕ່າງໆ ເຊັ່ນ: ການຜ່ອນຄາຍຄວາມກົດດັນຂອງສັງຄົມ ແລະ ທິດທາງການພັດທະນາຂອງຕະຫຼາດແຮງງານລາວໃນອະນາຄົດ, ຊຶ່ງມັນໄດ້ເພີ່ມຄວາມເຊື່ອໝັ້ນຕໍ່ຕະຫຼາດແຮງງານລາວອີກລະດັບໜຶ່ງ.



(2) ເພື່ອຊຸກຍູ້ການພັດທະນາເສດຖະກິດກະສິກາສີຂຽວໃນລາວ, ວຈຊຕ ໄດ້ຮ່ວມມືກັບໜ່ວຍງານສົ່ງເສີມກະສິກຳລາວ ເປີດຕະຫຼາດຜັກຂະໜາດນ້ອຍຢູ່ທີ່ບໍລິເວນແຄມໜອງດ້ານຫຼັງສູນການຄ້າວຽງຈັນເຊັ້ນເຕີ ແລະ ເປີດໃຫ້ບໍລິການທຸກໆວັນພຸດ, ວັນສຸກ ແລະ ວັນອາທິດ, ເປັນການອຳນວຍຄວາມສະດວກໃຫ້ແກ່ປະຊາຊົນ ແລະ ພ້ອມກັນນັ້ນກໍ່ສົ່ງເສີມການເພີ່ມລາຍຮັບຂອງຊາວກະສິກອນ.

VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299



(3) ການເສຍພັນທະອາກອນໃຫ້ລັດໃນຫ້າເດືອນຕົ້ນປີ 2022 ເປັນຈຳນວນເງິນ 147,81 ລ້ານກີບ ໂດຍປະກອບມີຄືດັ່ງລຸ່ມນີ້:

ຫົວໜ່ວຍ: ລ້ານກີບ

ດ/ລ	ລາຍການ	ຈຳນວນ
1	ອາກອນມູນຄ່າເພີ່ມ	143,06
2	ອາກອນເງິນເດືອນ	4,75
ລວມ:		147,81

ປະທານສະພາບໍລິຫານ

He Jun

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company